ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 4113 /ກປ

ນະຄອນຫຼວງວຽງຈັນ, ວັນທີ 22 SEP 2022

## ໜັງສືສະເໜີ

ຮຽນ: - ທ່ານ ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ;
- ທ່ານ ລັດຖະມົນຕີກະຊວງຍຸຕິທຳ.

ເລື່ອງ: ຢັ້ງຢືນ ແລະ ດັດແກ້ ແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ (2021-2025) ຂອງກະຊວງກະສິກຳ ແລະ ປ່າໄມ້.

- ອີງຕາມ ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ (ສະບັບປັບປຸງ) ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ແຈ້ງການເຊີນ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 1262/ຫສນຍ, ລົງວັນທີ 01 ກັນຍາ 2022 ກ່ຽວກັບກອງປະຊຸມລັດຖະບານ ສະໄໝວິສາມັນ ຄັ້ງວັນທີ 06-07 ກັນຍາ 2022.

ກະຊວງກະສິກຳ ແລະ ປ່າໄມ້ ຂໍຖືເປັນກຽດຮຽນມາຍັງທ່ານ ເພື່ອຢັ້ງຢືນ ແລະ ດັດແກ້ ແຜນການສ້າງ ແລະ ປັບປຸງກົດໝາຍ 05 ປີ (2021-2025) ຕາມໜັງສືແຈ້ງຕອບຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0269/ກປ, ລົງວັນທີ 18 ພຶດສະພາ 2021 ລວມມີ 05 ກົດໝາຍ ໃນນີ້ສ້າງໃໝ່ 01 ກົດໝາຍ ຄື: ກົດໝາຍ ວ່າດ້ວຍ ສະຫະກອນ ແລະ ປັບປຸງ 04 ກົດໝາຍ ຄື: ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ, ກົດໝາຍວ່າດ້ວຍການປະມົງ, ກົດໝາຍວ່າດ້ວຍກະສິກຳ ແລະ ກົດໝາຍວ່າດ້ວຍຊົນລະປະທານ. ສະນັ້ນ, ເພື່ອສືບຕໍ່ແຜນການສ້າງ ແລະ ປັບປຸງກົດໝາຍ ປີ 2023-2025 ຈຶ່ງສະເໜີຢັ້ງຢືນຄວາມພ້ອມໃນການຈັດຕັ້ງປະຕິບັດ ຕາມກຳນົດເວລາ ດັ່ງນີ້:

| ລ/ດ | ຊື່ ກົດໝາຍ | ໃໝ່/ປັບປຸງ | ຄາດຄະເນ | ກົມທີ່ຮັບຜິດຊອບ | ໝາຍເຫດ |
|---|---|---|---|---|---|
| 1 | ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ | ປັບປຸງ | ເຂົ້າກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX ຕົ້ນປີ 2023 | ກົມປ່າໄມ້ | ເລື່ອນມາແຕ່ປີ 2022 ຈາກກອງປະຊຸມສະໄໝສາມັນເທື່ອທີ 4 ມາກຳນົດເຂົ້າກອງປະຊຸມສະໄໝສາມັນເທື່ອທີ 5, ພ້ອມທັງສະເໜີປ່ຽນຊື່ 1) ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ມາເປັນ "<u>ກົດໝາຍວ່າດ້ວຍສັດປ່າ</u>", 2) ກົດໝາຍວ່າດ້ວຍການປະມົງ ມາເປັນ "<u>ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ</u>" ຕາມໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 3404/ກປ, ລົງວັນທີ 19 ກໍລະກົດ 2022 |
| 2 | ກົດໝາຍວ່າດ້ວຍການປະມົງ | ປັບປຸງ | | ກົມລ້ຽງສັດ ແລະ ການປະມົງ | |

ລພ



สแกนด้วย CamScanner

| | | | | | |
|---|---|---|---|---|---|
| 3 | ກົດໝາຍວ່າດ້ວຍສະຫະກອນ | ສ້າງໃໝ່ | ເຂົ້າກອງປະຊຸມສະໄໝສາມັນເທື່ອທີ 7 ສະພາແຫ່ງຊາດ ຊຸດທີ IX ຕົ້ນປີ 2024 | ກົມສົ່ງເສີມກະສິກຳ ແລະ ສະຫະກອນ | ເຫັນດີໃຫ້ກຳນົດຕາມ ໜັງສືລາຍງານຂອງກະຊວງຍຸຕິທຳ ສະບັບເລກທີ 1248/ກຍ, ລົງວັນທີ 12 ກັນຍາ 2022 (ເຂົ້າກອງປະຊຸມສະໄໝສາມັນເທື່ອທີ 7 ຕົ້ນປີ 2024) |
| 4 | ກົດໝາຍວ່າດ້ວຍກະສິກຳ | ປັບປຸງ | ເຂົ້າກອງປະຊຸມສະໄໝສາມັນເທື່ອທີ 8 ສະພາແຫ່ງຊາດ ຊຸດທີ IX ທ້າຍປີ 2024 | ກົມປູກຝັງ | ສະເໜີສັບຊ້ອນ ຈາກກອງປະຊຸມສະໄໝສາມັນເທື່ອທີ 6 ມາໃສ່ ກອງປະຊຸມສະໄໝສາມັນເທື່ອທີ 8 ທ້າຍປີ 2024 |
| 5 | ກົດໝາຍວ່າດ້ວຍຊົນລະປະທານ | ປັບປຸງ | ເຂົ້າກອງປະຊຸມສະໄໝສາມັນເທື່ອທີ 8 ສະພາແຫ່ງຊາດ ຊຸດທີ IX ທ້າຍປີ 2024 | ກົມຊົນລະປະທານ | ຢັ້ງຢືນຕາມແຜນເກົ່າ (ໜັງສືສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0269/ກປ, ລົງວັນທີ 18 ພຶດສະພາ 2021) ເຂົ້າກອງປະຊຸມສະໄໝສາມັນເທື່ອທີ 8 ທ້າຍປີ 2024 |

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອພິຈາລະນາ ຕາມເຫັນສົມຄວນດ້ວຍ. ໒.໑໔

ລັດຖະມົນຕີ

ປອ. ເພັດ ພົມພິພັກ

ບ່ອນນຳສົ່ງ:

1. ທ່ານ ລມຕ, ຮລມຕ ທ່ານລະ 01 ສະບັບ (ໃຊ້ຕາງລາຍງານ);
2. ຫ້ອງການກະຊວງ 01 ສະບັບ (ເພື່ອຊາບ);
3. ກົມລ້ຽງສັດ ແລະ ການປະມົງ 01 ສະບັບ (ເພື່ອກະກຽມ);
4. ກົມປ່າໄມ້ 01 ສະບັບ (ເພື່ອກະກຽມ);
5. ກົມສົ່ງເສີມກະສິກຳ ແລະ ສະຫະກອນ 01 ສະບັບ (ເພື່ອກະກຽມ);
6. ກົມປູກຝັງ 01 ສະບັບ (ເພື່ອກະກຽມ);
7. ກົມຊົນລະປະທານ 01 ສະບັບ (ເພື່ອກະກຽມ);
8. ພະແນກນິຕິກຳ 01 ສະບັບ (ເພື່ອຊຸກຍູ້);
9. ເກັບຮັກສາໄວ້ 01 ສະບັບ.



สแกนด้วย CamScanner